**ອາທິດທີ 2 ແຫ່ງພຣະກຣິສຕະສົມພົບ**

**ສະຫລອງພຣະກຣິສໂຕປະຈັກ**

**ວັນອາທິດທີ 06 ມັງກອນ 2019**



**ພຣະວໍລະສານໂດຍນັກບຸນມັດເທວ 2, 1-12**

ເມື່ອພຣະເຢຊູເຈົ້າຊົງບັງເກີດມາທີ່ເມືອງເບັດເລແຮມແຂວງຢູເດ ໃນສະໄມກະສັດເຮຣັອດ. ມີພວກບັນດິດຈາກທິດຕາເວັນອອກມາເຖິງນະຄອນເຢລູຊາແລມແລະຖາມວ່າ: ກະສັດຂອງຊາວຢູເດວຜູ້ຫາກໍຊົງບັງເກີດມາຢູ່ໃສ? ດ້ວຍເຫດວ່າພວກເຮົາໄດ້ເຫັນດວງດາວຂອງພຣະອົງທາງທິດຕາເວັນອອກ ແລະພ້ອມກັນມານະມັດສະການພຣະອົງ.

ພໍຊາບຂ່າວນີ້ແລ້ວ, ກະສັດເຮຣັອດກໍເກີດມີຄວາມສະເທືອນຕົກໃຈແລະຊາວນະຄອນເຢລູຊາແລມທັງຫລາຍກໍກະວົນກະວາຍດ້ວຍ. ກະສັດເຮຣັອດຈຶ່ງມີຄຳສັ່ງໃຫ້ປະຊຸມຄະນະສົງແລະຄະນະອາຈານພຣະຄຳພີທັງໝົດເພື່ອສືບຖາມວ່າ ພຣະກຣິສໂຕເຈົ້າຕ້ອງບັງເກີດຢູ່ໃສແທ້. ພວກເຂົາຕອບວ່າ: ທີ່ເມືອງເບັດເລແຮມ, ແຂວງຢູເດ. ດ້ວຍວ່າປະພາສົກໄດ້ຂຽນໄວ້ດັ່ງນີ້ວ່າ: ສ່ວນເຈົ້າ, ເບັດເລແຮມ, ດິນແດນແຫ່ງຢູດາເອີຍ, ເຈົ້າບໍ່ແມ່ນຜູ້ຕ່ຳຕ້ອຍເລີຍໃນເຂດແດນແຫ່ງຢູດາ. ດ້ວຍວ່າຜູ້ຈະເປັນຫົວໜ້າແລະຜູ້ນຳແຫ່ງຊາດອິສຣາແອນລາສະດອນຂອງເຮົາຈະອອກມາຈາກເຈົ້າ.

ກະສັດເຮຣັອດຈຶ່ງຮຽກພວກບັນດິດເຂົ້າມາເຝົ້າຢ່າງລັບໆ, ສືບຖາມຢ່າງຖີ່ຖ້ວນເຖິງເວລາທີ່ດາວດວງນັ້ນໄດ້ປາກົດອອກມາ. ແລ້ວຈຶ່ງສົ່ງພວກເຂົາໄປເມືອງເບັດເລແຮມພ້ອມຮັບສັ່ງວ່າ: ພວກທ່ານຈົ່ງໄປສືບຖາມເລື່ອງກຸມານໃຫ້ແຈ່ມແຈ້ງ ແລະເມື່ອພົບເຫັນແລ້ວ ຈົ່ງກັບມາບອກຂ້າພະເຈົ້າ ເພື່ອຂ້າພະເຈົ້າຈະໄປນະມັດສະການພຣະອົງດ້ວຍ.

ເມື່ອຮັບບັນຊານີ້ຈາກກະສັດແລ້ວ, ພວກບັນດິດກໍພ້ອມກັນອອກເດີນທາງ. ແລະດາວທີ່ພວກເຂົາໄດ້ເຫັນທາງທິດຕາເວັນອອກ ກໍປາກົດມານຳໜ້າພວກເຂົາ ຈົນໄປຢຸດຢູ່ບ່ອນທີ່ພຣະກຸມານຊົງປະທັບຢູ່. ພວກບັນດິດເຫັນດາວດວງນັ້ນກໍເກີດມີຄວາມຊື່ນຊົມຍິນດີເປັນອັນມາກ. ເມື່ອເຂົ້າໄປໃນເຮືອນແລ້ວ, ພວກເຂົາກໍພົບເຫັນພຣະກຸມານພ້ອມກັບພຣະນາງມາຣີອາ, ມານດາຂອງພຣະອົງ. ແລະພວກເຂົາກໍພາກັນຂາບລົງນະມັດສະການພຣະອົງ ແລ້ວໄຂຫີບຖວາຍທອງຄຳ, ກຳຍານແລະຢາງໄມ້ຫອມເປັນເຄື່ອງບັນນາການແດ່ພຣະອົງ.

ຫລັງຈາກນັ້ນ, ພວກບັນດິດກໍຊາບໃນຄວາມຝັນວ່າບໍ່ໃຫ້ກັບໄປຫາກະສັດເຮຣັອດ. ພວກເຂົາຈຶ່ງກັບສູ່ປະເທດຂອງຕົນດ້ວຍທາງສາຍອື່ນ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ມທ 2, 1-12**

ໃນວັນຕົ້ນປີໃໝ່, ວັນແຫ່ງການເລີ່ມຊີວິດໃໝ່ແລະສິ່ງໃໝ່ໆທີ່ເຂົ້າມາໃນຊີວິດຂອງພວກເຮົາ. ແລະເປັນຕົ້ນພວກເຮົາກຳລັງຢູ່ໃນບັນຍາກາດຂອງບຸນEpiphanie, ບຸນພຣະກຣິສໂຕສຳແດງພຣະອົງ. ແນ່ນອນ, ທຸກຄົນບໍ່ວ່າຜູ້ໃຫຍ່ຫລືຜູ້ໜຸ່ມນ້ອຍລ້ວນແຕ່ຢາກພົບເຫັນກະສັດໃນເຂົ້າໜົມ galette ເພື່ອຈະໄດ້ກາຍເປັນກະສັດແລະເປັນລາຊີນີ.

ວາຈາຂອງພຣະເຈົ້າຊຶ່ງພວກເຮົາອ່ານແລະຟັງໃນວັນນີ້ກໍເຊັ່ນດຽວກັນ ກໍມີສອງກຸ່ມຄົນທີ່ຊອກຫາພຣະເຢຊູເຈົ້າ, ກະສັດແຫ່ງໂລກຈັກກະວານ. ກຸ່ມທີໜຶ່ງນຳໂດຍກະສັດເຮຣົອດພ້ອມດ້ວຍພວກເຖົ້າແກ່ສົງແລະນັກປາດພຣະຄຳພີ. ພວກເຂົາຢາກຮູ້ຈັກສະຖານທີ່ຂອງການບັງເກີດມາຂອງພຣະເຢຊູເຈົ້າຢ່າງຈະແຈ້ງ. ອີງເທິງຄຳທຳນາຍຂອງບັນດາປະພາສົກໃນພຣະຄຳພີ ພວກເຂົາຈຶ່ງຮູ້ວ່າພຣະເຢຊູເຈົ້າໄດ້ບັງເກີດມາທີ່ເມືອງເບັດເລແຮມ. ພຣະອົງມາໃນໂລກນີ້ເພື່ອໃຫ້ທຸກຄົນທີ່ເຫັນແລະເຊື່ອໃນພຣະອົງໄດ້ຮັບຄວາມລອດ. ເມື່ອຮູ້ຂ່າວນີ້ແທນທີ່ກະສັດເຮຣົອດຈະມີຄວາມຊື່ນຊົມຍິນດີ, ກັບມີຄວາມໂມໂຫ, ອິດສາ, ເພາະຢ້ານພຣະເຢຊູເຈົ້າຈະເປັນກະສັດແທນບ່ອນຂອງຕົນ. ດັ່ງນັ້ນເພິ່ນຈຶ່ງຊອກຫາທຸກວິທີເພື່ອກຳຈັດພຣະອົງ.

ສ່ວນກຸ່ມຄົນທີສອງ, ແມ່ນພວກບັນດິດທີ່ມາຈາກທິດຕາເວັນອອກ. ພວກເຂົາເປັນຄົນຕ່າງສາດສະໜາ, ບໍ່ຮູ້ຈັກພຣະເຢຊູເຈົ້າ, ພວກເຂົາມາເບັດເລແຮມຍ້ອນມີດາວດວງໜຶ່ງນຳພາພວກເຂົາ. ດັ່ງນັ້ນ, ພວກເຂົາຈຶ່ງນຳແສງສະວ່າງຂອງດາວດວງນັ້ນໄປຈົນເຖິງບ່ອນທີ່ພຣະເຢຊູກຸມານປະທັບຢູ່, ແລະພວກເຂົາໄດ້ນົບໄຫວ້ນຳມັດສະການແລະຖະຫວາຍສິ່ງທີ່ພວກເຂົາມີໃຫ້ກັບພຣະອົງ. ສ່ວນກະສັດເຮຣົອດຢາກພົບພຣະເຢຊູເຈົ້າເພື່ອຂ້າພຣະອົງ.

ທັດສະນະທ່າທີຂອງກຸ່ມຄົນທັງສອງນີ້ບໍ່ໄດ້ຢູ່ໄກພວກເຮົາແຕ່ຢູ່ໃນພວກເຮົາ. ບາງຄັ້ງໃນຊີວິດ, ພວກເຮົາກໍເປັນເໝືອນກະສັດເຮຣົອດ: ມີຄວາມໂມໂຫ, ຄວາມອິດສາ, ຄວາມຈອງຫອງ, ຄວາມຮຸນແຮງໃນຄຳປາກຄຳເວົ້າແລະໃນກິດຈະການ. ຫລາຍຄັ້ງພວກເຮົາກໍຢາກກຳຈັດພຣະເຢຊູເຈົ້າອອກຈາກຊີວິດຂອງພວກເຮົາເຊັ່ນ: ການຂາດຄວາມເຊື່ອໃນພຣະເຈົ້າ, ການເອົາສິ່ງອື່ນມາແທນພຣະເຈົ້າ, ການບໍ່ປະຕິບັດຕາມຄຳສັ່ງສອນຂອງພຣະອົງແລະເປັນຕົ້ນການຂາດຄວາມຮັກຕໍ່ເພື່ອນພີ່ນ້ອງ.

ຂໍໃຫ້ແສງສະວ່າງທີ່ນຳພາພວກບັນດິດມາພົບພຣະເຢຊູເຈົ້າ ຈົ່ງນຳພາພວກເຮົາແຕ່ລະຄົນເຊັ່ນດຽວກັນໃຫ້ມາພົບພຣະເຢຊູເຈົ້າໃນວາຈາຂອງພຣະອົງແລະເປັນຕົ້ນໃນມະຫາບູຊາມິຊຊາ ແລະໃນເພື່ອນພີ່ນ້ອງທີ່ຕ້ອງການຄວາມຊ່ວຍເຫລືອຈາກພວກເຮົາ. ເພື່ອຊີວິດຂອງພວກເຮົາຈະໄດ້ເປັນເໝືອນດວງດາວທີ່ປະກາຍແສງເພື່ອນຳພາຄົນທີ່ຍັງບໍ່ຮູ້ຈັກພຣະເຢຊູເຈົ້າໃຫ້ມາພົບພຣະອົງ. ອາແມນ.

ຄຸນພໍ່ ອົງຕວນ ກຽດຕິສັກ